# ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ
# Economic Disputes Resolution in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 6
## ນະໂຍບາຍ, ຫຼັກການ ແລະ ມາດຕາການປົກປ້ອງຜົນປະໂຫຍດຂອງຄູ່ກໍລະນີ ກ່ຽວກັບວຽກງານ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ
## Policies, principles and clauses for the protection of the interests of the parties involved in resolving economic disputes

### 1. ນະໂຍບາຍຕໍ່ວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຖືວ່າເປັນວຽກງານໜຶ່ງທີ່ສຳຄັນ ຂອງຂະບວນການຍຸຕິທຳ ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກໍຄືການແກ້ໄຂຂໍ້ຂັດແຍ່ງທາງດ້ານສິດຜົນປະໂຫຍດຂອງຄູ່ກໍລະນີ ເຮັດໃຫ້ຂໍ້ຂັດແຍ່ງໄດ້ຮັບການແກ້ໄຂໂດຍສັນຕິວິທີ ຫຼຸດຜ່ອນຂໍ້ຂັດແຍ່ງທີ່ນຳໄປແກ້ໄຂຢູ່ສານ, ພັກ ແລະ ລັດຖະບານເຫັນໄດ້ຄວາມສຳຄັນຄືດັ່ງກ່າວ ຈຶ່ງໄດ້ວາງແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງເພື່ອເປັນບ່ອນອີງ ແລະ ເພື່ອອຳນວຍຄວາມສະດວກ ໃນການເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ໄດ້ຮັບຜົນດີ.

ສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການ ໃນວັນທີ 21 ເມສາ 1995 ຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບ ເລກທີ 106/ນຍ, ລົງວັນທີ 15 ກໍລະກົດ 1994 ຊຶ່ງເປັນການຈັດຕັ້ງໜຶ່ງທີ່ຂຶ້ນກັບໂຄງປະກອບກົງຈັກການຈັດຕັ້ງ ຂອງຂະແໜງຍຸຕິທຳ. ສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດມີພາລະບົດບາດຮັບເອົາຂໍ້ຂັດແຍ່ງທີ່ມີລັກສະນະເສດຖະກິດ ມາແກ້ໄຂດ້ວຍວິທີໄກ່ເກ່ຍ ຫຼື ດ້ວຍການຕັດສິນ (ຊີ້ຂາດ) ໂດຍກຳມະການ ຕາມການຮ້ອງຂໍຂອງຄູ່ກໍລະນີ ຊຶ່ງອາດຈະເປັນຂໍ້ຂັດແຍ່ງທາງດ້ານເສດຖະກິດ ລະຫວ່າງຄົນຕ່າງປະ ເທດກັບຄົນຕ່າງປະເທດ ຫຼື ລະຫວ່າງຄົນລາວກັບຄົນຕ່າງປະເທດ ຫຼື ລະຫວ່າງຄົນລາວກັບຄົນລາວດ້ວຍກັນ. ສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ເຂົ້າເປັນສະມາຊິກ ຂອງສົນທິສັນຍາແກ້ໄຂຂໍ້ຂັດແຍ່ງທາງດ້ານການຄ້າ (ນິວຢອກ 1958 ວ່າດວ້ຍ ການປະຕິບັດຄຳຕັດສິນຂອງຄະນະກຳມະການຕ່າງປະເທດ) ແຕ່ເດືອນ ທັນວາ ປີ 1998 ເປັນຕົ້ນມາ.

ກົດໝາຍວ່າດວ້ຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດສະບັບປີ 2018 ໄດ້ກຳນົດນະໂຍບາຍຂອງລັດວຽກງານກ່ຽວກັບແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໄວ້ວ່າ: ລັດສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການ ຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ຫຼື ຕ່າງປະເທດ ດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການໄກ່ເກ່ຍ ຫຼື ດ້ວຍການຕັດສິນຢ່າງສັນຕິວິທີ. ລັດອຳນວຍຄວາມສະດວກໃຫ້ສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສາມາດນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ ຕາມກົດໝາຍຢ່າງມີປະສິດທິຜົນ. ລັດສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນພາຍໃນ ຫຼື ຕ່າງປະເທດ ເຂົ້າຮ່ວມພັດທະນາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລວມທັງສ້າງຕັ້ງອົງການແກ້ໄຂຂໍ້

ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດ. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ຫຼື ຕ່າງ ປະເທດ ມີສິດເລືອກເອົາການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພາຍໃຕ້ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ[1].

ຕໍ່ນະໂຍບາຍດັ່ງກ່າວເຫັນໄດ້ວ່າ ລັດຖືເອົາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນໜຶ່ງໃນວຽກ ງານບູລິມະສິດ ປະກອບສ່ວນເຂົ້າໃນການແກ້ໄຂບັນຫາທີ່ເກີດຂຶ້ນຈາກການດຳເນີນທຸລະກິດ ຂອງບຸກຄົນ, ນິຕິບຸກ ຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ແນໃສ່ຍົກສູງສະຕິເຄົາລົບ ແລະ ຈັດຕັ້ງປະຕິບັດກົດໝາຍ ເພື່ອ ປົກປ້ອງສິດ ແລະ ຜົນປະໂຫຍດຂອງນັກທຸລະກິດ ສົ່ງເສີມການພັດທະນາທຸລະກິດໃຫ້ເຕີບໃຫຍ່ຂະ ຫຍາຍຕົວ ແລະ ມີການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຊຶ່ງເຮັດໃຫ້ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດ ຖະກິດໄດ້ ຮັບການເຜີຍແຜ່ໃຫ້ສັງຄົມຮັບຮູ້, ເຂົ້າໃຈ ແລະ ໄດ້ຮັບການຈັດຕັ້ງປະຕິບັດ ລັດໄດ້ໂຄສະນາເຜີຍແຜ່ລະບຽບກົດໝ າຍທີ່ກ່ຽວຂ້ອງ ພ້ອມທັງສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ນັກທຸລະກິດ ໃນການເຂົ້າເຖິງວຽກງານການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄືການນຳເອົາຂໍ້ຂັດແຍ່ງທາງດ້ານເສດຖະກິດໄປແກ້ໄຂຢູ່ອົງການແກ້ໄຂຂໍ້ຂັດ ແຍ່ງທາງດ້ານເສດຖະກິດ.

ເພື່ອເປັນການສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃນການເຂົ້າເຖິງວຽກງານດັ່ງກ່າວ ພ້ອມທັງເປັນ ການຂະຫຍາຍພາລະບົດບາດຂອງຕົນໃຫ້ທົ່ວເຖິງໃນຂອບເຂດທົ່ວປະເທດ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານ ເສດຖະກິດ ໄດ້ຂະຫຍາຍການຈັດຕັ້ງຂອງຕົນລົງສູ່ທ້ອງຖິ່ນ ມາເຖິງທ້າຍປີ 2004 ໄດ້ມີການສ້າງຕັ້ງຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂຶ້ນຢູ່ບັນດາແຂວງຕ່າງໆທີ່ມີເງື່ອນໄຂຄື: ແຂວງອຸດົມໄຊ, ຫລວງພະບາງ, ສະຫວັນນະເຂດ ແລະ ຈຳປາສັກ ແລະ ມີຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນໃນທົ່ວປະເທດຈຳນວນທັງໝົດ 140 ຄົນ ແລະ ມາເຖິງປີ 2020 ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດມີຈຳນວນທັງໝົດ 14 ແຫ່ງ (1 ສູນ ແລະ 13 ຫ້ອງການ) ຊຶ່ງໄດ້ມີການຂະຫຍາຍຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຢູ່ໃນບັນດາ ແຂວງທີ່ມີຄວາມພ້ອມເຊັ່ນ: ອຸດົມໄຊ, ຫຼວງພະບາງ, ສະ ຫວັນນະເຂດ, ຈຳປາສັກ, ຜົ້ງສາລີ, ຫຼວງນ້ຳທາ, ບໍ່ ແກ້ວ, ຫົວພັນ, ຊຽງຂວາງ ໄຊຍະບູລີ, ວຽງຈັນ, ຄຳມ່ວນ ແລະ ສາລະວັນ. ມີຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນທັງໝົດ 188 ຄົນ, ຍິງ 35 ຄົນ ໃນນີ້ ມີກຳມະການຕັດສິນ 88 ຄົນ, ມີຍິງ 17 ຄົນ ແລະ ອານາຄົດຍັງຈະສືບຕໍ່ຂະຫຍາຍ ວຽກງານດັ່ງກ່າວໄປຍັງບັນດາແຂວງທີ່ມີຄວາມພ້ອມທາງດ້ານການຈັດຕັ້ງ ແລະ ບຸກຄະລາກອນຕື່ມອີກ.

ພາລະບົດບາດຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ ໄດ້ຖືກຮັບປະກັນຢ່າງ ໜັກແໜ້ນ ດ້ວຍການນຳໃຊ້ ຕາມດຳລັດຂອງນາຍົກ ລັດຖະມົນຕີ ສະບັບເລກທີ 106/ນຍ, ລົງວັນທີ 15 ກໍລະກົດ 1994 ຫຼັງຈາກນັ້ນ ໄດ້ສ້າງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດສະບັບທຳອິດ ແລະ ປະກາດໃຊ້ໃນທ້າຍປີ 2005[2]. ຕໍ່ມາກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈຶ່ງໄດ້ມີ ການປັບປຸງໃນປີ 2010 ແລະ ປີ 2018. ການສ້າງ ແລະ ປັບປຸງກົດໝາຍກໍແມ່ນເພື່ອເປັນບ່ອນອີງໃນການ ຈັດຕັ້ງ ປະຕິບັດຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃນການເຄື່ອນໄຫວວຽກງານ ຊຶ່ງກົດໝາຍວ່າດ້ວຍການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນໄດ້ກຳນົດກ່ຽວກັບຫຼັກການ ແລະ ລະບຽບການເຄື່ອນໄຫວວຽກງານ ດັ່ງກ່າວ ພ້ອມກັນນັ້ນ ຍັງໄດ້ມີການໂຄສະນາເຜີຍແຜ່ໃຫ້ສັງຄົມຮັບຮູ້, ເຂົ້າໃຈ ແລະ ນຳເອົາຂໍ້ຂັດແຍ່ງທາງດ້ານ ເສດຖະກິດ ໄປແກ້ໄຂຢູ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

---

[1] ກົດໝາຍ ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2018, ມາດຕາ 4

[2] ແຜນແມ່ບົດ ກ່ຽວກັບການພັດທະນາລັດແຫ່ງກົດໝາຍ ຂອງ ສປປ ລາວ ແຕ່ນີ້ຮອດປີ 2020 ໜ້າທີ 26

ນອກຈາກກົດໝາຍພາຍໃນແລ້ວ ລັດຍັງໄດ້ເຂົ້າຮ່ວມເປັນພາຄີໃນສົນທິສັນຍາຕ່າງໆ ທີ່ກ່ຽວຂ້ອງກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນຕົ້ນແມ່ນ ສົນທິສັນຍານິວຢອກ 1958, ສົນທິສັນຍາສິງກະໂປ ແລະ ຍັງໄດ້ສ້າງນິຕິກຳລຸ່ມກົດໝາຍເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນຳອີກ.

ເພື່ອຍົກສູງຄຸນນະພາບ ຂອງວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ນັບມື້ນັບສູງຂຶ້ນ ລັດໄດ້ເອົາ ໃຈໃສ່ໃນການພັດທະນາບຸກຄະລາກອນ ໃນຂົງເຂດຍຸຕິທຳເວົ້າລວມ, ການສ້າງບຸກຄະລາກອນໃນຂົງເຂດວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເວົ້າສະເພາະ ໂດຍລັດໄດ້ມອບໃຫ້ກະຊວງຍຸຕິທຳເປັນເຈົ້າການ. ໃນນີ້ກະຊວງຍຸຕິ ໄດ້ເອົາໃຈໃສ່ຝຶກອົບຮົມດ້ານວິຊາການ, ວິຊາສະເພາະໃຫ້ບຸກຄະລາກອນວິຊາການເປັນປະຈຳ ຕິດພັນກັບການເຄື່ອນໄຫວຖອດຖອນບົດຮຽນຈາກອົງການໄກ່ເກ່ຍເສດຖະກິດຂອງພາກພື້ນ ແລະ ສາກົນເຊັ່ນ: ໂອຕຣິດ, ສິງກະໂປ, ມາເລເຊຍ, ອົດສະຕຣາລີ, ສປ ຈີນ, ຣາຊະອານາຈັກໄທ. ພ້ອມກັນນັ້ນ ກໍໄດ້ສ້າງຫຼັກສູດຝຶກອົບຮົມວິຊາຊີບດັ່ງກ່າວ ເພື່ອເປັນຄູ່ມືຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ຜູ້ໄກ່ເກ່ຍ, ຜູ້ຕັດສິນ ແລະ ພະນັກງານໃນຂົງເຂດວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ນັບມື້ນັບເພີ່ມຂຶ້ນ.

## 1.1 ນະໂຍບາຍພາຍໃນຕໍ່ວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### 1.1.1 ການສົ່ງເສີມ ແລະ ການສ້າງເງື່ອນໄຂຂອງລັດ ຕໍ່ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ແຜນພັດທະນາ ວຽກງານຂະແໜງຍຸຕິທຳ ຕໍ່ກອງປະຊຸມໃຫຍ່ຄັ້ງທີ IV ຂອງອົງຄະນະພັກກະຊວງຍຸຕິທຳໄດ້ກຳ ນົດກ່ຽວກັບຍຸດທະສາດຮອດປີ 2025 ກ່ຽວກັບວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໄວ້ໃນພາກທີ III, ຂໍ້ທີ 4 ໄວ້ວ່າ: ປັບປຸງກົງຈັກການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກຂອງອົງການຊ່ວຍໜູນຍຸຕິທຳ ເປັນຕົ້ນແມ່ນສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ໃຫ້ໜັກແໜ້ນ ແລະ ເຂັ້ມແຂງໃນທຸກດ້ານເພື່ອຫັນເປັນຫົວໜວຍບໍລິຫານວິຊາການທີ່ສາມາດກຸ້ມຕົນເອງດ້ານງົບປະມານເທື່ອລະກ້າວ[3].

ເພື່ອເປັນການສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ແກ່ພະນັກງານທີ່ເຮັດວຽກກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລັດຖະບານ ກໍຄືອົງການຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ກຳນົດກ່ຽວກັບແຜນຍຸດທະສາດໃນການພັດທະນາຂະແໜງຍຸຕິທຳ ໂດຍສະເພາະແມ່ນການປັບປຸງກົງຈັກການຈັດຕັ້ງ ຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເປັນແຕ່ລະໄລຍະ ເພື່ອໃຫ້ແທດເໝາະກັບສະພາບການຕົວຈິງ ການປັບປຸງກົງຈັກການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນໄດ້ສະແດງອອກໃນການປັບປຸງພາລະບົດ ບາດຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ວາງລະບຽບ, ຫຼັກການ ແລະ ປັບປຸງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃນແຕ່ລະໄລຍະເພື່ອໃຫ້ສອດຄ່ອງກັບສະພາບການທາງດ້ານເສດຖະກິດ-ສັງຄົມ ແລະ ການປະຕິບັດໜ້າທີ່ຂອງອົງການ. ນອກຈາກນັ້ນ ໃນການປັບປຸງການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ນອກຈາກອີງໃສ່ປະສົບການທີ່ເຄີຍປະຕິບັດມາແລ້ວ ຍັງໄດ້ນຳເອົາບົດຮຽນຂອງຕ່າງປະເທດ ເພື່ອນຳມາເປັນບົດຮຽນໃນການປັບປຸງແບບແຜນວິທີເຮັດວຽກໃຫ້ສອດ ຄ່ອງກັບສະພາບການຂອງລາວ ແລະ ຂອງສາກົນ ເພື່ອຫັນວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເປັນຫົວໜ່ວຍວິຊາການທີ່ກຸ້ມຕົນເອງທາງດ້ານງົບປະມານ ແລະ ຫັນເປັນວິຊາຊີບທາງສັງຄົມໃນອານາຄົດ.

### 1.1.2 ການຄຸ້ມຄອງ ແລະ ການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ກ. ການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

[3] ແຜນພັດທະນາຂະແໜງການຍຸຕິທຳ, ພາກທີ III ຍຸດຖະສາດຮອດປີ 2025, ຂໍ້ 4

ອົງການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ ກະຊວງຍຸຕິທຳ ແລະ ພະແນກຍຸຕິທຳແຂວງ, ນະຄອນຫຼວງ.

**1) ກະຊວງຍຸຕິທຳ;**

ໃນການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກະຊວງຍຸຕິທຳ ມີສິດ ແລະ ໜ້າທີ່ດັ່ງນີ້:

- ຄົ້ນຄວ້ານະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອສະເໜີລັດຖະບານພິຈາລະນາ;

- ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະ ກິດເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

- ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລວມທັງລະບຽບການ ກ່ຽວກັບການສ້າງຕັ້ງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເອກະຊົນ ແລະ ສະເພາະກິດ;

- ຊີ້ນຳ ແລະ ຄຸ້ມຄອງດ້ານການຈັດຕັ້ງຂອງສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ຊີ້ນຳ, ຕິດຕາມ ການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃນຂອບເຂດທົ່ວປະເທດ;

- ສ້າງ, ບຳລຸງ ແລະ ຍົກລະດັບຄວາມຮູ້ຄວາມສາມາດ, ຈັນຍາບັນ ແລະ ວິຊາສະເພາະ ໃຫ້ພະນັກງານຂອງສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ;

- ສະເໜີນາຍົກລັດຖະມົນຕີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ມີຄຳເຫັນກ່ຽວກັບການແຕ່ງຕັ້ງຫົວໜ້າ ແລະ ຮອງຫົວໜ້າຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມການສະເໜີຂອງອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

- ແຕ່ງຕັ້ງ ຫຼື ປົດຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນເຂົ້າໃນ ຫຼື ອອກຈາກບັນຊີລາຍຊື່ຜູ້ໄກ່ເກ່ຍ ຫຼື ບັນຊີລາຍຊື່ຜູ້ຕັດສິນ ຕາມການສະເໜີຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ຄົ້ນຄວ້າ, ສະເໜີສ້າງຕັ້ງ ແລະ ຍຸບເລີກອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດ;

- ອະນຸຍາດການເຂົ້າມາເຄື່ອນໄຫວຂອງຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນຕ່າງປະເທດ ຢູ່ ສປປ ລາວ ຕາມການສະເໜີຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ລັດຖະບານຢ່າງເປັນປົກກະຕິ;

- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**2) ພະແນກຍຸຕິທຳແຂວງ, ນະຄອນຫຼວງ.**

ສິດ ແລະ ໜ້າທີ່ຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງ ໃນການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພະແນກຍຸຕິທຳແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນດັ່ງນີ້:

- ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ໂຄສະນາ, ເຜີຍແຜ່, ສຶກສາອົບຮົມກົດໝາຍ ແລະ ລະບຽບການກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ຊີ້ນຳ ແລະ ຄຸ້ມຄອງດ້ານການຈັດຕັ້ງ ແລະ ງົບປະມານຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ຊີ້ນຳ, ຕິດຕາມ ການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ສະເໜີກະຊວງຍຸຕິທຳ ມີຄວາມເຫັນກ່ຽວກັບການສ້າງຕັ້ງ ແລະ ປັບປຸງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ຮັບ, ຄົ້ນຄວ້າ ແລະ ແກ້ໄຂຄຳຮ້ອງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວກັບການ ເຄື່ອນໄຫວວຽກງານຂອງຜູ້ໄກ່ເກ່ຍ, ຜູ້ຕັດສິນ ຫຼື ພະນັກງານຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕໍ່ກະຊວງຍຸ ຕິທຳ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ຂ. ອົງການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ອົງການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ:

1). ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 75 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດ ຖະກິດ ຊຶ່ງປະກອບດ້ວຍ: ກະຊວງຍຸຕິທຳ ແລະ ພະແນກຍຸຕິທຳແຂວງ, ນະຄອນຫຼວງ;

ອົງການກວດກາພາຍໃນ ແມ່ນອົງການກວດກາຕາມສາຍຕັ້ງຂອງຂະແໜງການຍຸຕິທຳ ໃນນີ້ຂັ້ນສູນກາງແມ່ນກົມກວດກາຂອງກະຊວງຍຸຕິທຳ ແລະ ຂັ້ນທ້ອງຖິ່ນ ແມ່ນພະແນກຍຸຕິທຳແຂວງ, ນະຄອນຫຼວງ ຊຶ່ງຕ້ອງໄດ້ດຳເນີນຕາມແຜນການປົກກະຕິ, ການກວດກາຕາມຄຳສັ່ງ ຫຼື ຄຳສະເໜີ ແລະ ແບບກະທັນຫັນ. ເນື້ອໃນ ແລະ ເປົ້າໝາຍຂອງການກວດກາພາຍໃນ ແມ່ນແນໃສ່ກວດກາການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ແຜນການ, ສິດ ແລະ ໜ້າທີ່ ຄວາມຮັບຜິດ ຊອບໃນການຄຸ້ມຄອງບໍລິຫານວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແບບບໍລິຫານການປົກຄອງ ແລະ ລະບຽບການດ້ານວິຊາສະເພາະ, ເຕັກນິກ, ຫຼັກການຄຸ້ມຄອງຕາມຂະແໜງ ການຍຸຕິທຳ.

ການກວດກາພາຍໃນຕໍ່ວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຍັງແມ່ນການດຳເນີນການກວດກາພາຍໃນຂະແໜງຍຸຕິທຳຕາມສາຍຕັ້ງ ຂອງການຈັດຕັ້ງ ເພື່ອຕິດຕາມການຈັດຕັ້ງປະຕິບັດວຽກງານແກ້ໄຂຂໍ້ຂັດແຍ່ງທາງ ດ້ານເສດຖະກິດຂອງ ສກສ ແລະ ຫກສ ເພື່ອຊອກໃຫ້ເຫັນພື້ນຖານຂອງຄວາມຫຍຸ້ງຍາກ, ຂໍ້ຄົງ ຄ້າງ ແລະ ອື່ນໆ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອຄົ້ນຄວ້າສະເໜີວິທີທາງອອກ, ການປັບປຸງກົນໄກການຈັດຕັ້ງ, ສັບຊ້ອນພະນັກງານພາຍໃນ ສກສ ແລະ ຫກສ, ຍົກລະດັບຄວາມສາມາດໃນການບໍລິການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດໃຫ້ສັງຄົມຢ່າງທັນການ, ໂປ່ງໃສ ແລະ ຫຍັບເຂົ້າສູ່ລະບົບສາກົນເທື່ອລະກ້າວ.

2). ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ ຖະບານ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ ແລະ ອົງການໄອຍະການປະຊາຊົນ.

ອົງການກວດການພາຍນອກ ແມ່ນອົງການຈັດຕັ້ງຂອງລັດຕາມສາຍຂວາງ ຫຼື ເອີ້ນວ່າ ອົງການທີ່ມີສິດ ແລະ ໜ້າທີ່ຮັບຜິດຊອບວຽກງານກວດກາ ຊຶ່ງຈະດຳເນີນຕາມການສະເໜີຂອງບຸກຄົນ, ການຈັດຕັ້ງໃດໜຶ່ງ ຫຼື ລິເລີ່ມໂດຍອົງການກວດກາພາຍນອກເອງ ໃນກໍລະນີເຫັນວ່າມີບັນຫາທີ່ບໍ່ຈະແຈ້ງ ແລະ ບໍ່ໂປ່ງໃສ. ອົງການທີ່ມີສິດກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພາຍນອກປະກອບມີ ສະພາແຫ່ງຊາດ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ ແລະ ອົງການໄອຍະການປະຊາຊົນ.

**ສະພາແຫ່ງຊາດ** ສະພາແຫ່ງຊາດ ແມ່ນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ເປັນອົງການສູງສຸດແຫ່ງອຳນາດລັດ, ເປັນອົງການນິຕິບັນຍັດ ປະຕິບັດພາລະບົດບາດຮັບຮອງເອົາລັດຖະທຳມະນູນ ແລະ ກົດໝາຍ, ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຕິດຕາມກວດກາການເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດ. ສະພາແຫ່ງຊາດ ມີພາລະບົດບາດຮັບຮອງເອົາລັດຖະທຳມະນູນ ແລະ ກົດໝາຍ, ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຕິດຕາມກວດກາການເຄົາລົບ, ປະຕິບັດລັດຖະທຳມະນູນ, ກົດໝາຍຂອງບັນດາອົງການລັດ. ສະພາແຫ່ງຊາດ ມີສິດ ແລະ ໜ້າທີ່ລວມ ດັ່ງນີ້: ສິດ ແລະ ໜ້າທີ່ ດ້ານນິຕິບັນຍັດ, ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ, ສິດ ແລະ ໜ້າທີ່ ດ້ານການຕິດຕາມກວດກາ.

ສະພາແຫ່ງຊາດມີ ສິດ ແລະ ໜ້າທີ່ດ້ານການຕິດຕາມກວດກາ ດັ່ງນີ້:

- ຕິດຕາມກວດກາ ການປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ໂຄງການລະດັບຊາດ ແລະ ໂຄງການຂະໜາດໃຫຍ່ທີ່ມີຜົນກະທົບຕໍ່ ສິ່ງແວດລ້ອມ ແລະ ສັງຄົມ;
- ຕິດຕາມກວດກາການປະຕິບັດໜ້າທີ່ ຂອງບຸກຄະລາກອນ ທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ບຸກຄະລາກອນ ທີ່ສະພາແຫ່ງຊາດຮັບຮອງເອົາການແຕ່ງຕັ້ງ;
- ຕິດຕາມກວດກາການຈັດຕັ້ງປະຕິບັດ ມະຕິຂອງກອງປະຊຸມສະພາແຫ່ງຊາດ ກ່ຽວກັບບົດລາຍງານການເຄື່ອນໄຫວວຽກງານ ແລະ ທິດທາງແຜນການເຄື່ອນໄຫວວຽກງານຂອງອົງການໄອຍະການປະຊາຊົນສູງສຸດສານປະຊາຊົນສູງສຸດ ແລະ ອົງການກວດສອບແຫ່ງລັດ;
- ຕິດຕາມກວດກາສະພາປະຊາຊົນຂັ້ນແຂວງ ໃນການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ມະຕິຂອງກອງປະຊຸມສະພາແຫ່ງຊາດ ແລະ ມະຕິຂອງຄະນະປະຈຳສະພາແຫ່ງຊາດ.

**ອົງການກວດກາລັດ** ແມ່ນອົງການທີ່ໄດ້ຮັບການສ້າງຕັ້ງຂຶ້ນ ຕາມຂັ້ນບໍລິຫານການປົກຄອງ ແລະ ຕາມຂະແໜງການ ຊຶ່ງຢູ່ພາຍໃຕ້ການຊີ້ນຳໂດຍກົງ ຂອງຫົວໜ້າອົງການບໍລິຫານແຕ່ລະຂັ້ນ ແລະ ຢູ່ພາຍໃຕ້ການແນະນຳດ້ານວຽກງານວິຊາສະເພາະ ຂອງອົງການກວດກາລັດຂັ້ນເທິງ.

ການກວດກາລັດ ແມ່ນ ການເຄື່ອນໄຫວ ຕິດຕາມ, ກວດກາ, ເກັບກຳຂໍ້ມູນ ແລະ ຫຼັກຖານ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ໜ້າທີ່ ຄວາມຮັບຜິດຊອບຂອງການ ຈັດຕັ້ງ ແລະ ບຸກຄົນ ຢູ່ໃນອົງການອຳນາດລັດ ເພື່ອພິຈາລະນາ, ຕີລາຄາ, ປະເມີນຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ພ້ອມທັງສະເໜີວິທີການ ແລະ ມາດຕະການ ໃຫ້ອົງການທີ່ກ່ຽວຂ້ອງ ຂອງເປົ້າໝາຍຖືກກວດກາ ແກ້ໄຂຜົນຂອງການກວດກາຕາມກົດໝາຍ.

ເປົ້າໝາຍການກວດກາ ແມ່ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຂຶ້ນກັບອົງການບໍລິຫານການປົກຄອງ, ຂະແໜງການບໍລິຫານລັດແຕ່ລະຂັ້ນ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ.

ການກວດກາລັດ ມີ ສອງປະເພດ ດັ່ງນີ້:

- ການກວດກາ ຕາມຂັ້ນບໍລິຫານການປົກຄອງ;
- ການກວດກາ ຕາມຂະແໜງການ.

ການກວດກາລັດ ມີ ສາມ ຮູບການ ດັ່ງນີ້:

- ການກວດກາ ຕາມແຜນການປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການຂອງການບໍລິ ຫານ ແລະ ອົງການກວດກາລັດແຕ່ລະຂັ້ນ ທີ່ໄດ້ວາງໄວ້;
- ການກວດກາ ຕາມຄຳສັ່ງ ຫຼື ຄຳສະເໜີ ຊຶ່ງແມ່ນ ການກວດກາຕາມຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ຂອງຫົວໜ້າອົງການບໍລິຫານ, ຂອງອົງການກວດກາລັດແຕ່ລະຂັ້ນ ແລະ ຄຳສະເໜີຂອງພົນລະ ເມືອງ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຊາບລ່ວງໜ້າ;
- ການກວດກາ ແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າ ໝາຍຖືກກວດກາ ຊາບລ່ວງໜ້າ.

ການກວດກາລັດມີເນື້ອໃນ ດັ່ງນີ້ :

- ການປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ໂຄງການ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການຄຸ້ມຄອງບໍລິຫານລັດ;
- ການປະຕິບັດວຽກງານດ້ານວິຊາສະເພາະ, ເຕັກນິກ, ຫຼັກການຄຸ້ມຄອງຂອງຂະແໜງການ;
- ຜົນການກວດສອບ ຕາມການສະເໜີຂອງອົງການກວດສອບແຫ່ງລັດ, ຕາມມະຕິກອງປະຊຸມ ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ.

**ອົງການກວດສອບລັດ** ອົງການກວດສອບແຫ່ງລັດ ແມ່ນອົງການດຳເນີນການກວດສອບການຄຸ້ມຄອງ, ການນຳໃຊ້ງົບປະມານ, ການເງິນ ແລະ ຊັບສິນຂອງລັດ, ຖືກສ້າງຕັ້ງ ຫຼື ຍຸບເລີກໂດຍສະພາແຫ່ງຊາດ, ເຄື່ອນໄຫວບົນພື້ນຖານກົດໝາຍ, ມີພາລະບົດບາດກວດສອບ ບັນດາອົງການຈັດຕັ້ງຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍວ່າດ້ວຍການກວດສອບລັດ ຊຶ່ງເປົ້າໝາຍຖືກກວດສອບມີ ດັ່ງນີ້:

- ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງອື່ນ ທີ່ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ເງິນ ແລະ ຊັບສິນຂອງລັດ;
- ອົງການຈັດຕັ້ງການເມືອງ-ສັງຄົມ ທີ່ນຳໃຊ້ງົບປະມານແຫ່ງລັດ;

- ກົມກອງ ທີ່ຂຶ້ນກັບກຳລັງປະກອບອາວຸດ;

- ໂຄງການລົງທຶນຂອງລັດ ທີ່ນຳໃຊ້ທຶນມາຈາກງົບປະມານພາຍໃນ, ທຶນກູ້ຢືມ, ທຶນສົມທົບ ຫຼື ທຶນຊ່ວຍ ເຫຼືອລ້າຈາກພາຍໃນ ຫຼື ຕ່າງປະເທດ;

- ທະນາຄານແຫ່ງ ສປປ ລາວ, ທະນາຄານທຸລະກິດຂອງລັດ, ວິສາຫະກິດຂອງລັດ, ວິສາຫະກິດປະສົມ, ບໍລິສັດມະຫາຊົນ ແລະ ວິສາຫະກິດຮັບເໝົາກໍ່ສ້າງ ໂຄງການລົງທຶນຂອງລັດ;

- ຫົວໜ່ວຍການບັນຊີ ຕາມການເຫັນດີຂອງຄະນະປະຈຳສະພາແຫ່ງຊາດ ຫຼື ນາຍົກລັດຖະມົນຕີ.

ການກວດສອບແຫ່ງລັດ ແມ່ນຂະບວນການເຄື່ອນໄຫວເກັບກຳຂໍ້ມູນ ແລະ ຫຼັກຖານຕົວຈິງກ່ຽວກັບເປົ້າໝາຍຖືກກວດສອບ ຊຶ່ງດຳເນີນໂດຍອົງການກວດສອບແຫ່ງລັດ ແນໃສ່ຢັ້ງຢືນຄວາມຖືກຕ້ອງ ຂອງເອກະສານລາຍງານການເງິນ, ຄວາມສອດຄ່ອງທາງດ້ານກົດໝາຍ, ປະສິດທິຜົນໃນການຄຸ້ມຄອງ, ການນຳໃຊ້ທຶນຮອນຂອງຫົວໜ່ວຍງົບປະມານ, ຫົວໜ່ວຍທຸລະກິດ ແລະ ຫົວໜ່ວຍທີ່ບໍ່ສະແຫວງຫາຜົນກຳໄລ.

**ອົງການໄອຍະການປະຊາຊົນ** ແມ່ນອົງການຕິດຕາມກວດກາຂອງລັດ, ມີພາລະບົດບາດຕິດຕາມ ແລະ ກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ພົນລະເມືອງ ເພື່ອໃຫ້ມີຄວາມຖືກຕ້ອງ, ເປັນເອກະພາບ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ຕາມກົດໝາຍ.

ອົງການໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

- ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ ແລະ ພົນລະເມືອງ. ການຕິດຕາມກວດການີ້ ເອີ້ນວ່າ ການຕິດຕາມກວດກາທົ່ວໄປ;

- ຕິດຕາມກວດກາ ການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ;

- ດຳເນີນການສືບສວນ-ສອບສວນຄະດີໃດໜຶ່ງ ເປັນທັງໝົດ ຫຼື ບາງສ່ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

- ສັ່ງຟ້ອງຜູ້ຖືກຫາ ຂຶ້ນສານ;

- ຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີຢູ່ສານ;

- ຕິດຕາມກວດກາການປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;

- ຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ;

- ຕິດຕາມກວດກາການຄົ້ນຄວ້າ, ການສະເໜີ ແລະ ການຈັດຕັ້ງປະຕິບັດ ການໃຫ້ອະໄພຍະໂທດ ຕາມລັດຖະດຳລັດ ຂອງປະທານປະເທດ;

- ປະສານສົມທົບກັບອົງການສືບສວນ-ສອບສວນ ແລະ ອົງການອື່ນທີ່ກ່ຽວຂ້ອງດຳເນີນການສະກັດກັ້ນ, ຕ້ານອາຊະຍາກຳ ຫຼື ການກະທຳຜິດ ແລະ ການລະເມີດກົດໝາຍ ພ້ອມທັງລຶບລ້າງບັນດາສາເຫດ ແລະ ເງື່ອນໄຂທີ່ພາ ໃຫ້ການກະທຳຜິດເກີດຂຶ້ນ;

- ຮື້ຟື້ນຄະດີ ຕາມກົດໝາຍ ໃນກໍລະນີທີ່ມີຫຼັກຖານໃໝ່;

- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ການກວດກາຈາກພາຍນອກ ແມ່ນເພື່ອຕິດຕາມກວດກາ, ສືບສວນ-ສອບສວນ, ເກັບກຳຂໍ້ມູນຫຼັກຖານ ເພື່ອຢັ້ງ ຢືນຄວາມຖືກຕ້ອງ ຫຼື ຄວາມຜິດພາດ ຂອງການຈັດຕັ້ງປະຕິບັດວຽກງານຂອງ ສກສ ແລະ ຫກສ ເນື່ອງ ຈາກວ່າ ພາກ ສ່ວນທາງນອກເຂົ້າມາກວດກາ ແມ່ນໃນກໍລະນີເກີດມີບັນຫາ, ເກີດມີຫາງສຽງ, ເກີດເປັນຄະດີ ຊຶ່ງພາລະບົດບາດຂອງການກວດກາບໍ່ນອນຢູ່ໃນຄວາມຮັບຜິດຊອບພາຍໃນ ຫຼື ສາຍຕັ້ງ.

**ຄ. ເນື້ອໃນຕົ້ນຕໍຂອງການກວດກາ**

ເນື້ອໃນຕົ້ນຕໍ ຂອງການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີດັ່ງນີ້:

- ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ຄຳຮ້ອງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວກັບການແກ້ໄຂຂໍ້ແຍ່ງທາງດ້ານເສດຖະກິດ;

- ການເຄື່ອນໄຫວຂອງສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ການຄຸ້ມຄອງ ແລະ ການນຳໃຊ້ລາຍຮັບລາຍຈ່າຍຂອງສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານ ເສດຖະ ກິດ;

- ຄວາມຮັບຜິດຊອບ ແລະ ການປະພຶດຂອງພະນັກງານຢູ່ສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານ ເສດຖະ ກິດ, ຂອງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ.

ການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດມີສາມຮູບການດັ່ງນີ້:

- ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີການ ກຳນົດເວລາອັນແນ່ນອນ;

- ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີ ຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

- ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບ ລ່ວງໜ້າ.

ໃນການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະ ບຽບການຢ່າງເຂັ້ມງວດ.

## 1.2 ນະໂຍບາຍພາຍນອກຕໍ່ວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນຊຸມປີທີ່ຜ່ານມາ, ໂດຍພາຍໃຕ້ແສງສະຫວ່າງຂອງມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກປະຊາຊົນ ປະຕິ ວັດລາວທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ໄດ້ເປັນເຈົ້າການຈັດ ຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020), ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ແລະ ວິໄສທັດ ຮອດປີ 2030, ຊຶ່ງໄດ້ຮັບຜົນສຳເລັດເປັນກ້າວໆມາ. ສຳລັບການເຄື່ອນໄຫວວຽກງານ ຕ່າງປະເທດ ຂອງ ສປປ ລາວ ກໍໄດ້ປະສົບຜົນສຳເລັດໃນຫຼາຍດ້ານ ທັງໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ, ທັງຢູ່

ພາຍໃນ ແລະ ຕ່າງປະເທດ, ຊຶ່ງໄດ້ສືບຕໍ່ປະກອບ ສ່ວນອັນສຳຄັນ ເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາສ້າງສາປະເທດຊາດ ໂດຍສືບຕໍ່ຍຶດໝັ້ນແນວທາງການຕ່າງປະເທດ "**ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ຢ່າງສະເໝີຕົ້ນສະເໝີປາຍ ແລະ ປະຕິບັດນະໂຍບາຍ ເປີດກວ້າງການພົວພັນຮ່ວມມື ແບບຫຼາຍທິດ, ຫຼາຍຝ່າຍ ແລະ ຫຼາຍຮູບແບບ, ທັງປະຕິບັດທິດນຳ "ເພີ່ມມິດຫຼຸດຜ່ອນສັດຕູ**" ຕາມແນວທາງການປ່ຽນແປງໃໝ່ຂອງພັກ ແລະ ປະຕິບັດຄຳຂວັນຂອງກອງປະຊຸມວຽກງານການຕ່າງປະເທດ ຄັ້ງທີ XIV ຄື " ການທູດປ້ອງກັນເຫດ ແລະ ບຸກທະລຸ ເພື່ອພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ", "ເພີ່ມທະວີປະສິດທິພາບການຈັດຕັ້ງປະຕິບັດ ຜົນການເຄື່ອນໄຫວການຕ່າງປະເທດໃຫ້ປະກົດຜົນເປັນຮູບປະທຳ" ລວມຄວາມແລ້ວ, ການນຳພາຂອງພັກເຮົາ ຕໍ່ວຽກງານຕ່າງປະເທດ ໃນໄລຍະປ່ຽນແປງໃໝ່ ໄດ້ສະແດງອອກຢ່າງຈະແຈ້ງໃນການກຳນົດແນວທາງ ນະໂຍບາຍການຕ່າງປະເທດ ທີ່ສອດຄ່ອງກັບແຕ່ລະໄລຍະ, ມີການຊີ້ນຳໂດຍກົງແຕ່ສູນກາງລົງຮອດທ້ອງຖິ່ນ. ສະນັ້ນ, ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານການຕ່າງປະເທດ ມີປະສິດທິຜົນ, ພັກຕ້ອງໄດ້ນຳພາ ແລະ ເສີມຂະຫຍາຍ ບົດບາດຂອງຂະແໜງການຕ່າງໆ, ຍົກສູງຄຸນນະພາບວຽກງານແນວຄິດການເມືອງ ແລະ ທິດສະດີ, ບຳພາກໍ່ສ້າງ, ບຳລຸງຖັນແຖວພະນັກງານ ແລະ ການຈັດຕັ້ງທີ່ເຮັດວຽກງານຕ່າງປະເທດ, ເອົາໃຈໃສ່ຊີ້ນຳກວດກາທຸກການເຄື່ອນໄຫວວຽກງານການຕ່າງປະເທດ ເພື່ອນຳເອົາຜົນປະໂຫຍດສູງສຸດມາໃຫ້ແກ່ປະເທດຊາດ[4].

ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລັດສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການປະສານງານ, ແລກປ່ຽນບົດຮຽນ, ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ບຸກຄະລາກອນຂອງການ ຈັດຕັ້ງແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ປະຕິບັດວຽກງານດັ່ງກ່າວໃຫ້ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາ ກົນທີ່ ສປປ ລາວ ເປັນພາຄີ[5].

ສະນັ້ນ ເພື່ອຜັນຂະຫຍາຍ ເນື້ອໃນຈິດໃຈ ຂອງວຽກງານດັ່ງກ່າວ ເຂົ້າສູ່ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລັດຖະບານຈຶ່ງອະນຸມັດໃຫ້ ສປປ ລາວ ເຂົ້າຮ່ວມເປັນພາຄີສົນທິສັນຍານິວຢອກ 1958 ວ່າດ້ວຍການຮັບຮູ້ ແລະ ການບັງຄັບປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ໃນປີ 1997, ເຂົ້າຮ່ວມເປັນພາຄີ ຂອງສົນທິສັນຍາ ສິງກະໂປ ວ່າດ້ວຍການໄກ່ເກ່ຍ ໃນປີ 2019 ແລະ ຍັງໄດ້ເຊັນສັນຍາຮ່ວມມືສອງຝ່າຍ ການຊ່ວຍເຫຼືອ ແພ່ງ, ອາຍາ (ຈີນ, ຫວຽດ, ໄທ, ເກົາຫຼີເໜືອ, ອັງກິດ, ຣັດເຊຍ)

ຕໍ່ກັບວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລັດຍັງອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຂໍ້ຂັດແຍ່ງທາງດ້ານເສດຖະກິດ ນຳເອົາຂໍ້ຂັດແຍ່ງຂອງຕົນ ໄປແກ້ໄຂຢູ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດໄດ້ ໂດຍ ສປປ ລາວ ຮັບຮູ້ຄຳຕັດສິນຂອງອົງການແກ້ໄຂຂໍ້ຂັດແຍ່ງຂອງຕ່າງປະເທດ ແລະ ນຳເອົາຂໍ້ຂັດແຍ່ງທີ່ໄກ່ເກ່ຍ ຫຼື ຕັດສິນສຳເລັດມາຈັດຕັ້ງປະຕິບັດ ໂດຍການຮັບຮູ້ຜົນການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວໂດຍສານປະຊາຊົນ (ຄຳແນະນຳປະທານສານສູງ ກ່ຽວກັບການຮັບຮູ້ຄຳຕັດສິນສານຕ່າງປະເທດ). ນອກຈາກນັ້ນ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງ ສປປ ລາວ ຍັງສາມາດແກ້ໄຂຂໍ້ຂັດແຍ່ງຂອງຄູ່ກໍລະນີທີ່ເປັນຄົນຕ່າງປະເທດດ້ວຍກັນ ຫຼື ຂໍ້ຂັດແຍ່ງລະຫວ່າງຄົນຕ່າງປະເທດກັບນັກທຸລະກິດລາວ ໂດຍອີງໃສ່ຫຼັກການຄວາມສະໝັກໃຈ ມາແກ້ໄຂຢູ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງ ສປປ ລາວ ຫຼື ບໍ່.

---

[4] ບົດສະເໜີ "ພັກປະຊາຊົນປະຕິວັດລາວ ໄດ້ວາງນະໂຍບາຍການຕ່າງປະເທດ ຢ່າງຖືກຕ້ອງ ແລະ ສອດຄ່ອງ ໃນແຕ່ລະຍຸກແຕ່ລະສະໄໝ" ໂດຍ: ກົມການຂ່າວ, ກະຊວງການຕ່າງປະເທດ

[5] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ມາດຕາ 7

ນອກຈາກນັ້ນ ລັດຍັງໄດ້ສົ່ງເສີມກ່ຽວກັບການເຂົ້າຮ່ວມເປັນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນຂອງຄົນຕ່າງປະເທດ ໂດຍການກຳນົດກ່ຽວກັບມາດຖານ ແລະ ເງື່ອນໄຂຂອງຄະນະກຳມະການທີ່ເປັນຄົນຕ່າງປະເທດ ໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພ້ອມທັງສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາກລັດ ແລະ ເອກະຊົນຕ່າງປະເທດ ເຂົ້າຮ່ວມພັດທະນາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍການສະເໜີສ້າງຕັ້ງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດຂຶ້ນ ໂດຍລັດເປັນຜູ້ຄຸ້ມຄອງ ແລະ ກຳນົດກ່ຽວກັບລະບຽບການສ້າງຕັ້ງ ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດັ່ງກ່າວ.

## 2. ຫຼັກການພື້ນຖານຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນການດຳເນີນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງກຳແໜ້ນ ແລະ ປະຕິບັດຕາມຫຼັກການພື້ນຖານດັ່ງນີ້:

### 2.1 ຄວາມສະໝັກໃຈຂອງຄູ່ກໍລະນີ

ໝາຍເຖິງການທີ່ຄູ່ກໍລະນີນຳເອົາຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂໂດຍບໍ່ມີການບັງຄັບນາບຂູ່ຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງໃດໜຶ່ງ[6] ຫຼື ເວົ້າອີກຢ່າງໜຶ່ງວ່າແມ່ນເຈດຈຳນົງຂອງຄູ່ກໍລະນີເອງ ທີ່ຕ້ອງການໃຫ້ຂໍ້ຂັດແຍ່ງຂອງພວກກ່ຽວໄດ້ຮັບການແກ້ໄຂໂດຍອົງການດັ່ງກ່າວ ຊຶ່ງບໍ່ຕ້ອງການໃຫ້ໄປດຳເນີນການແກ້ໄຂຢູ່ສານປະຊາຊົນ(ຕາມຂະບວນການຍຸຕິທຳ) ຄວາມສະໝັກໃຈຂອງຄູ່ກໍລະນີໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະແດງອອກດ້ວຍສອງຮູບການດັ່ງນີ້:

ຮູບການທີ່ 1: ໄດ້ກຳນົດໄວ້ໃນສັນຍາ ໝາຍຄວາມວ່າ ໃນເວລາສ້າງສັນຍາຄູ່ກໍລະນີ ຫຼື ຄູ່ສັນຍາໄດ້ມີຂໍ້ກຳນົດຕົກລົງກັນໃນເບື້ອງຕົ້ນໂດຍເລືອກເອົາອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນອົງການແກ້ໄຂໃນກໍລະນີທີເກີດມີບັນຫາຂໍ້ຂັດແຍ່ງ ເຊັ່ນວ່າ" ເມື່ອມີຂໍ້ຂັດແຍ່ງເກີດຂຶ້ນຈາກການລະເມີດສັນຍາດັ່ງກ່າວຄູ່ກໍລະນີທັງສອງຝ່າຍເຫັນດີໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເປັນບ່ອນພິຈາລະນາແກ້ໄຂດ້ວຍຮູບການໄກ່ເກ່ຍ".

ຮູບການທີ 2: ຄູ່ກໍລະນີໄດ້ສະໝັກໃຈໃຫ້ພິຈາລະນາແກ້ໄຂຂໍ້ຂັດແຍ່ງ ໝາຍຄວາມວ່າ: ໃນສັນຍາຄູ່ກໍລະນີທັງສອງຝ່າຍບໍ່ໄດ້ກຳນົດ ແລະ ຕົກລົງກ່ຽວກັບອົງການແກ້ໄຂຂໍ້ຂັດແຍ່ງ, ແຕ່ເມື່ອມີບັນຫາຂໍ້ຂັດແຍ່ງເກີດຂຶ້ນຄູ່ກໍລະນີທັງສອງຝ່າຍໄດ້ເປັນເອກະພາບເຫັນດີເລືອກເອົາອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນບ່ອນພິຈາລະນາແກ້ໄຂ, ພ້ອມທັງເລືອກເອົາຮູບການແກ້ໄຂດ້ວຍການໄກ່ເກ່ຍ ການຕົກລົງດັ່ງກ່າວຕ້ອງເປັນລາຍລັກອັກສອນໂດຍທີ່ຄູ່ກໍລະນີຕ້ອງຍື່ນຄຳຕົກລົງເຫັນດີດັ່ງກ່າວມາໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອດຳເນີນຕາມຂັ້ນຕອນຂອງການແກ້ໄຂຂໍ້ຂັດແຍ່ງ ຫຼື ວ່າພາຍຫຼັງມີຂໍ້ຂັດແຍ່ງເກີດຂຶ້ນຄູ່ກໍລະນີຝ່າຍຮ້ອງຂໍໄດ້ປະກອບຄຳຮ້ອງຂໍ ພ້ອມດ້ວຍຮູບການແກ້ໄຂດ້ວຍການໄກ່ເກ່ຍຕາມແບບພິມຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລ້ວຍື່ນມາຍັງອົງການແກ້ໄຂດັ່ງກ່າວ ພ້ອມກັນນັ້ນຄູ່ກໍລະນີຝ່າຍຖືກຮ້ອງຂໍກໍໄດ້ເຂົ້າມາຮັບຊາບຄຳຮ້ອງຂໍ ແລະ ປະກອບເອກະສານຄຳແກ້ຄຳຮ້ອງຂໍ ພ້ອມດ້ວຍຮູບການແກ້ໄຂດ້ວຍຮູບການໄກ່ເກ່ຍຕາມແບບພິມຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລ້ວຍື່ນມາຍັງອົງການແກ້ໄຂດັ່ງກ່າວ ນີ້ກໍຖືໄດ້ວ່າແມ່ນຄວາມສະໝັກໃຈຂອງຄູ່ກໍລະນີໃນການແກ້ໄຂຂໍ້ຂັດແຍ່ງ.

### 2.2 ການຮັບປະກັນຄວາມຍຸຕິທຳ, ວ່ອງໄວ ແລະ ສອດຄ່ອງກັບກົດໝາຍ

[6] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 9

ໝາຍຄວາມວ່າ: ໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍຕ້ອງໄດ້ຄຳນຶງວ່າ ວິທີການແກ້ໄຂຂໍ້ຂັດແຍ່ງທີ່ຄູ່ກໍລະນີທັງສອງຝ່າຍຍອມຮັບເອົາໄດ້ນັ້ນ ແມ່ນບົນພື້ນຖານຄວາມຍຸຕິທຳ, ຮັບປະກັນຄວາມວ່ອງໄວ ແລະ ສອດຄ່ອງກັບກົດໝາຍ.[7]

### 2.3 ຄວາມສະເໝີພາບຂອງຄູ່ກໍລະນີ

ໝາຍຄວາມວ່າ: ໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄູ່ກໍລະນີແຕ່ລະຝ່າຍມີສິດເທົ່າທຽມກັນ, ສະເໝີພາບຕໍ່ໜ້າກົດໝາຍ ໂດຍບໍ່ຈຳແນກເພດ, ໄວ, ເຊື້ອຊາດ, ສັນຊາດ, ຊົນເຜົ່າ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຍຸ, ຄວາມເຊື່ອຖື, ພູມລຳເນົາ ແລະ ອື່ນໆ. ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດທີ່ດຳເນີນທຸລະກິດ ຢູ່ສປປລາວ ມີສິດສະເໝີພາບຄືກັນກັບພົນລະເມືອງລາວ ຖ້າຫາກກົດໝາຍບໍ່ໄດ້ກຳນົດໄວ້ຢ່າງອື່ນ.[8]

### 2.4 ຄວາມເປັນເອກະລາດ, ທ່ຽງທຳ ແລະ ໂປ່ງໃສ ຂອງຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ

ໝາຍຄວາມວ່າ: ໃນການດຳເນີນການໄກ່ເກ່າຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍຕ້ອງປະຕິບັດໜ້າທີ່ຂອງຕົນຢ່າງເປັນເອກະລາດ, ທ່ຽງທຳ ແລະ ຮັບປະກັນຄວາມໂປ່ງໃສພາຍໃຕ້ລະບຽບກົດໝາຍ ປາສະຈາກການແຊກແຊງຈາກບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ.[9]

### 2.5 ພາສາທີ່ນຳໃຊ້

ພາສາທີ່ນຳໃຊ້ເຂົ້າໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດຢູ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແມ່ນພາສາລາວ ເວັ້ນເສຍແຕ່ສັນຍາ ຫຼື ຄູ່ກໍລະນີຫາກຕົກລົງກັນໄວ້ຢ່າງອື່ນ, ສ່ວນຄູ່ກໍລະນີ ຫຼື ຜູ້ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງທີ່ບໍ່ຮູ້ພາສາລາວສາມາດນຳໃຊ້ພາສາຕົນເອງ ຫຼື ພາສາອື່ນໂດຍຜ່ານຜູ້ແປພາສາ.[10]

### 2.6 ການຮັບປະກັນຄວາມຮັບ

ໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ການຮັກສາຄວາມລັບມີຄວາມສຳຄັນໃຫ້ແກ່ຄູ່ກໍລະນີ ເພາະໃນການດຳເນີນທຸລະກິດຂອງພວກກ່ຽວນັ້ນອາດມີຄວາມລັບ ຊຶ່ງພວກກ່ຽວບໍ່ຕ້ອງການໃຫ້ຂໍ້ຂັດແຍ່ງນັ້ນຖືກເປີດເຜີຍສູ່ສັງຄົມ ອັນຈະພາໃຫ້ມີຜົນກະທົບຕໍ່ການດຳເນີນທຸລະກິດທັງເປັນການຂາດຄວາມເຊື່ອຖື ຫຼື ເຊື່ອໝັ້ນທາງດ້ານທຸລະກິດ. ສະນັ້ນ, ຄູ່ກໍລະນີຈຶ່ງສາມາດເລືອກຮູບແບບການໄກ່ເກ່ຍເພື່ອຕົກລົງບັນຫາ ພາໃຫ້ຂໍ້ຂັດແຍ່ງຈົບລົງໂດຍບໍ່ເປີດເຜີຍສູ່ສັງຄົມ ແລະ ໃນຂະບວນການດຳເນີນການໄກ່ເກ່ຍມີແຕ່ຄູ່ກໍລະນີເຂົ້າຮ່ວມດ້ວຍຕົນເອງໂດຍອາໃສຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍເປັນຜູ້ໃຫ້ຄຳປຶກສາ ແລະ ຊ່ວຍເຫຼືອແນະນຳທາງອອກທີ່ເປັນຜົນປະໂຫຍດແກ່ທັງສອງຝ່າຍ. ນອກນັ້ນ, ໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂໍ້ມູນ, ຫຼັກຖານ ແລະ ເອກະສານຕ່າງໆທີ່ໄດ້ນຳມາສະເໜີໃນເວລາການໄກ່ເກ່ຍຕ້ອງໄດ້ຮັກສາເປັນຄວາມລັບ. ຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມອື່ນບໍ່ມີສິດເປີດເຜີຍຄວາມລັບຕໍ່ບຸກຄົນພາຍນອກ, ເວັ້ນເສຍແຕ່ໄດ້ຮັບການອະນຸຍາດຈາກຄູ່ກໍລະນີເທົ່ານັ້ນ.[11] ບັນດາຂໍ້ມູນທີ່ໄດ້ຈາກການໄກ່ເກ່ຍຈະຮັກສາໄວ້ເປັນຄວາມລັບ ແລະ ບໍ່ສາມາດນຳໄປເປັນຫຼັກຖານໃນການແກ້ໄຂດ້ວຍຮູບການຕັດສິນໄດ້ ຫຼື ການດຳເນີນຄະດີຂອງສານ ແລະ ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍບໍ່ມີສິດເປີດເຜີຍບັນດາຂໍ້ມູນທີ່ໄດ້ຈາກການໄກ່ເກ່ຍນັ້ນ ສູ່ບຸກຄົນອື່ນ.

---

[7] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 10

[8] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 11

[9] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 12

[10] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 13

[11] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 2018 ມາດຕາ 14

## 3. ມາດຕະການປົກປ້ອງຜົນປະໂຫຍດຂອງຄູ່ກໍລະນີ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນໄລຍະດຳເນີນການພິຈາລະນາຕັດສິນນັ້ນ ຖ້າຄູ່ກໍລະນີຫາກສະເໜີໃຫ້ນຳໃຊ້ມາດຕະການໃດໜຶ່ງເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນເຊັ່ນ ການຍຶດ ຫຼື ອາຍັດຊັບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຖ້າເຫັນວ່າມີຄວາມຈຳເປັນ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ກໍຈະສົ່ງຄຳສະເໜີພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ ໂດຍຜ່ານສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄປຍັງສານປະຊາຊົນແຂວງ, ນະຄອນຫຼວງ ບ່ອນຊັບຕັ້ງຢູ່ ເພື່ອພິຈາລະນາອອກຄຳສັ່ງ ພາຍໃນເວລາຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ[12].

ການຍຶດຊັບ ໝາຍເຖິງ ການເອົາຊັບເຄື່ອນທີ່ ຊຶ່ງພົວພັນກັບຂໍ້ຂັດແຍ່ງມາໄວ້ເປັນຂອງກາງຕາມຄຳສັ່ງຂອງສານ. ໃນກໍລະນີທີ່ໄດ້ຮູ້ແຈ້ງ ກ່ຽວກັບປະເພດ, ຈຳນວນ, ບັນຊີຊັບ ຫຼື ສະຖານທີ່ເກັບມ້ຽນວັດຖຸສິ່ງຂອງ, ສິນຄ້າ ຫຼື ປະເພດສັງຫາລິມະຊັບອື່ນ ພົວພັນກັບຂໍ້ຂັດແຍ່ງ ທີ່ເປັນປະໂຫຍດໃຫ້ແກ່ການດຳເນີນການແກ້ໄຂຂໍ້ຂັດແຍ່ງ ຫຼື ເພື່ອຮັບປະກັນການຮ້ອງຂໍ ຫຼື ການຮ້ອງຂໍແຍ່ງ ຕາມຄຳຮ້ອງຂໍຂອງຄູ່ຄວາມຝ່າຍໃດ ຝ່າຍໜຶ່ງ ຫຼື ຕາມຄຳເຫັນຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ[13].

ການອາຍັດຊັບ ໝາຍເຖິງ ການບໍ່ອະນຸຍາດໃຫ້ຊື້, ຂາຍ, ມອບ, ໂອນ, ແລກປ່ຽນ, ຊວດຈຳ, ຄ້ຳປະກັນ, ຕໍ່ເຕີມ, ສ້ອມແປງ, ທຳລາຍ ຫຼື ປ່ຽນແປງ ແລະ ອື່ນໆ ກ່ຽວກັບຊັບເຄື່ອນທີ່ ຫຼື ຊັບຄົງທີ່ ລວມທັງບັນຊີເງິນຝາກຢູ່ທະນາຄານ ທີ່ພົວພັນກັບຂໍ້ຂັດແຍ່ງ ຕາມຄຳສັ່ງຂອງສານ. ໃນກໍລະນີທີ່ໄດ້ຮູ້ແຈ້ງກ່ຽວກັບປະເພດ, ຈຳນວນ, ບັນຊີສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ພົວພັນກັບຂໍ້ຂັດແຍ່ງ ທີ່ເປັນປະໂຫຍດໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງ ຫຼື ເພື່ອຮັບປະກັນການຮ້ອງຂໍ ຫຼື ການຮ້ອງຂໍແຍ່ງ ຕາມຄຳຮ້ອງຂໍຂອງຄູ່ກໍລະນີຝ່າຍໃດໜຶ່ງ ຫຼື ຕາມຄຳເຫັນຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ.[14]

ເພື່ອຮັບປະກັນການປົກປ້ອງສິດ ຜົນປະໂຫຍດຂອງຄູ່ກໍລະນີໃນການໃຊ້ແທນຄ່າເສຍຫາຍ ຫຼື ໃຊ້ແທນໜີ້ສິນຂອງຕົນ ແລະ ເພື່ອບໍ່ໃຫ້ຄູ່ກໍລະນີອີກຝ່າຍໜຶ່ງນຳໃຊ້ຊັບທີ່ເປັນເປົ້າໝາຍຂອງຂໍ້ຂັດແຍ່ງ ຫຼື ຊັບທີ່ເປັນເປົ້າໝາຍໃນການໃຊ້ແທນໜີ້ສິນໄປຂາຍ, ມອບໃຫ້ຜູ້ອື່ນ, ຊຸກເຊື່ອງ, ທຳລາຍຖິ້ມ ຫຼື ນຳໄປຄ້ຳປະກັນເພື່ອເປັນການຫຼົບຫຼີກການໃຊ້ແທນຫນີ້ສິນແກ່ຄູ່ກໍລະນີຝ່າຍທີ່ເປັນເຈົ້າຫນີ້. ຄູ່ກໍລະນີຝ່າຍໃດໜຶ່ງ ມີສິດສະເໜີຕໍ່ຄະນະກຳມະການຕັດສິນ ເພື່ອສະເໜີຕໍ່ ສກສ ຫຼື ຫກສ ສະເໜີໄປຫາສານປະຊາຊົນ ອອກຄຳສັ່ງຍຶດຊັບ ຫຼື ອາຍັດຊັບດັ່ງກ່າວ ໃນການສະເໜີນັ້ນ ຄູ່ກໍລະນີຕ້ອງເຮັດໜັງສືສະເໜີຫາຄະນະກຳມະການຕັດສິນ ພ້ອມທັງສະໜອງຂໍ້ມູນຫຼັກຖານທີ່ກ່ຽວຂ້ອງກັບຊັບທີ່ຕ້ອງຍຶດ ຫຼື ອາຍັດໃຫ້ແກ່ຄະນະກຳມະການຕັດສິນເພື່ອພິຈາລະນາ.

ຄຳຮ້ອງຂໍໃຫ້ນຳໃຊ້ມາດຕະການ ເພື່ອປົກປ້ອງຜົນປະໂຫຍດຂອງຄູ່ກໍລະນີ ຕ້ອງປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

- ຊື່ ຂອງສານ ທີ່ຈະຍື່ນຄຳຮ້ອງຂໍເຖິງ;
- ຊື່ ແລະ ນາມສະກຸນ, ທີ່ຢູ່, ການພົວພັນຂໍ້ຂັດແຍ່ງ ຂອງຜູ້ຍື່ນຄຳຮ້ອງຂໍ;
- ຂໍ້ມູນລະອຽດ ກ່ຽວກັບຊັບສິ່ງຂອງ, ຊື່ ແລະ ນາມສະກຸນ, ທີ່ຢູ່, ການພົວພັນຂໍ້ຂັດແຍ່ງຂອງບຸກຄົນທີ່ກ່ຽວຂ້ອງ ກັບການອອກມາດຕະການ;

[12] ກົດໝາຍ ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປັບປຸງ ປີ 2018, ມາດຕ 41

[13] ກົດໝາຍ ວ່າດ້ວຍການດຳເນີນແພ່ງ ສະບັບປັບປຸງປີ 2012, ມາດຕາ 122

[14] ກົດໝາຍ ວ່າດ້ວຍການດຳເນີນແພ່ງ ສະບັບປັບປຸງປີ 2012, ມາດຕາ 123

- ສະຫຼຸບເຫດການໂດຍຫຍໍ້ຂອງຂໍ້ຂັດແຍ່ງ ແລະ ເຫດຜົນຂອງການຮ້ອງຂໍ;

- ເອກະສານທີ່ພົວພັນກັບການຮ້ອງຂໍ;

- ວັນ, ເດືອນ, ປີ ທີ່ຍື່ນຄຳຮ້ອງຂໍ;

- ລາຍເຊັນຂອງຄູ່ກໍລະນີ[15].

ຄູ່ກໍລະນີ ມີສິດຂໍອຸທອນ, ຂໍລົບລ້າງ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ມີສິດສະເໜີຄັດຄ້ານຄຳສັ່ງກ່ຽວກັບມາດຕະການຮັບປະກັນການຮ້ອງຂໍພາຍໃນກຳນົດເວລາເຈັດວັນ ນັບແຕ່ວັນໄດ້ຮັບຊາບຄຳສັ່ງໃຫ້ປະຕິບັດມາດຕະການຂອງສານເປັນຕົ້ນໄປ. ການຂໍອຸທອນ, ຂໍລົບລ້າງ ຫຼື ສະເໜີຄັດຄ້ານ ຄຳສັ່ງປ່ຽນແປງ ຫຼື ລົບລ້າງມາດຕະການຮັບປະກັນການຮ້ອງຂໍ ໃຫ້ຍື່ນຕໍ່ຄະນະສານຂັ້ນທີ່ກ່ຽວຂ້ອງ ເປັນຜູ້ພິຈາລະນາ[16].

ໃນກໍລະນີທີ່ສານ ບໍ່ອອກຄຳສັ່ງຍຶດ ຫຼື ອາຍັດຊັບ ຕາມການສະເໜີຂອງ ສກສ ຫຼື ຫກສ ໂດຍທີ່ບໍ່ມີເຫດຜົນພຽງພໍ ຄູ່ກໍລະນີມີສິດຂໍອຸທອນຄຳສັ່ງດັ່ງກ່າວໄດ້.

ໃນກໍລະນີທີ່ຄູ່ກໍລະນີ ຫຼື ອົງການໄອຍະການປະຊາຊົນເຫັນວ່າ ຄຳສັ່ງຍຶດຊັບ ຫຼື ອາຍັດຊັບ ຂອງສານ ບໍ່ຖືກຕ້ອງ ຄູ່ກໍລະນີ ຫຼື ອົງການໄອຍະການປະຊາຊົນ ສາມາດຂໍລົບລ້າງ ຫຼື ຄັດຄ້ານຄຳສັ່ງດັ່ງກ່າວໄດ້.

ຄຳສັ່ງຂອງຄະນະສານ ກ່ຽວກັບມາດຕະການຮັບປະກັນການຮ້ອງຟ້ອງ ມີຜົນບັງຄັບປະຕິ ບັດຄືກັນກັບຄຳຕັດສິນອື່ນຂອງສານ. ບຸກຄົນ, ການຈັດຕັ້ງ ຫຼື ວິສາຫະກິດ ທີ່ມີການລະເມີດເນື້ອໃນໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນຄຳສັ່ງດັ່ງກ່າວ ຕ້ອງຮັບຜິດຊອບຕໍ່ກົດໝາຍ ແລະ ຜົນເສຍຫາຍທັງໝົດ ທີ່ຕົນໄດ້ກໍ່ຂຶ້ນ[17].

ໃນການຈັດຕັ້ງປະຕິບັດ ຄຳສັ່ງຍຶດ ຫຼື ອາຍັດຊັບຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ສານຕ້ອງຮຽກຄູ່ຄວາມເຂົ້າຮ່ວມ ເພື່ອແຈ້ງ ແລະ ຕິດຄຳສັ່ງຂອງສານໄວ້ບ່ອນຊັບສິ່ງຂອງຕັ້ງຢູ່, ຫ້ອງການປົກຄອງບ້ານ, ສານປະຊາຊົນ ແລະ ຂະແໜງການທີ່ກ່ຽວຂ້ອງ. ຜູ້ຮ້ອງຂໍໃຫ້ອອກມາດຕະການຮັບປະກັນການຮ້ອງຂໍ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ກ່ຽວກັບການຈັດຕັ້ງປະຕິບັດມາດຕະການດັ່ງກ່າວ[18].

ການທີ່ ສກສ ຫຼື ຫກສ ນຳໃຊ້ມາດຕະການປົກປ້ອງຜົນປະໂຫຍດດັ່ງກ່າວນີ້ ຍ້ອນວ່າສ່ວນຫຼາຍຄູ່ກໍລະນີຝ່າຍທີ່ມີພັນທະມັກຈະນຳຊັບຂອງຕົນໄປຂາຍ, ມອບໃຫ້ຜູ້ອື່ນ, ຊຸກເຊື່ອງ, ນຳໃຊ້ເປັນຫຼັກຊັບຄ້ຳປະກັນ ຫຼື ທຳລາຍຖິ້ມ ແລະ ອື່ນໆ ເພື່ອເປັນການຫຼົບຫຼີກການໃຊ້ແທນໜີ້ສິນແກ່ຄູ່ກໍລະນີຝ່າຍທີ່ເປັນເຈົ້າໜີ້. ພ້ອມກັນນີ້, ການນຳໃຊ້ມາດຕະການດັ່ງກ່າວ ກໍເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດຄຳຕັດສິນຂອງກຳມະການຕັດສິນ ມີປະສິດທິຜົນສາມາດຈັດຕັ້ງປະຕິບັດໄດ້ ແລະ ທັງສາມາດຮັບປະກັນການໃຊ້ແທນໜີ້ສິນໃຫ້ແກ່ຄູ່ກໍລະນີທີ່ເປັນເຈົ້າໜີ້ໄດ້.

ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບໍ່ໄດ້ກຳນົດໃຫ້ອຳນາດແກ່ຄະນະກຳມະການຕັດສິນ ໃນການອອກຄຳສັ່ງກ່ຽວກັບການນຳໃຊ້ມາດຕະການດັ່ງກ່າວໄດ້ໂດຍກົງ ແຕ່ກໍໄດ້ໃຫ້ສິດໃນການສະເໜີ ໃຫ້ສານປະຊາຊົນທີ່ກ່ຽວຂ້ອງ ເປັນຜູ້ອອກຄຳສັ່ງກ່ຽວກັບມາດຕະການດັ່ງກ່າວ ຄະນະສານການຄ້າທີ່ຢູ່ໃນສານປະຊາຊົນແຂວງ, ນະຄອນຫຼວງ ເປັນຜູ້ອອກ ຄຳສັ່ງໃຫ້ບັນພື້ນຖານກົດໝາຍ ຊຶ່ງຄະນະສານການຄ້າມີສິດອຳນາດພິຈາລະນາກ່ຽວກັບ:

[15] ກົດໝາຍ ວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 128

[16] ກົດໝາຍ ວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 131

[17] ກົດໝາຍ ວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 132

[18] ກົດໝາຍ ວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 133, ວັກທີ 1 ແລະ ວັກທີ 4

- ການຮ້ອງຂໍ ໃຫ້ຢັ້ງຢືນບົດບັນທຶກການໄກ່ເກ່ຍ, ຄຳຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ ແລະ ຄຳຕັດສິນຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ການຮ້ອງຂໍ ໃຫ້ຢັ້ງຢືນ ຫຼື ບັງຄັບປະຕິບັດຄຳຕົກລົງ ຫຼື ຄຳຕັດສິນຂອງສານ ຫຼື ຂອງກຳມະການຕັດສິນຕ່າງປະເທດ, ຄຳຕັດສິນຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

- ການຮ້ອງຂໍ ໃຫ້ອອກຄຳສັ່ງຍຶດ, ອາຍັດຊັບ ຫຼື ການນຳໃຊ້ມາດຕະການອື່ນ ຂອງຄະນະກຳມະການຕັດສິນຂອງສູນ, ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ຫຼື ສະເພາະກິດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ;

- ການຮ້ອງຂໍ ໃຫ້ນຳໃຊ້ມາດຕະການຕໍ່ນິຕິບຸກຄົນ ທີ່ຖືກຍຸບເລີກ ຫຼື ລົ້ມລະລາຍ;

- ການຮ້ອງຂໍ ກ່ຽວກັບການປົກປ້ອງສິດທາງດ້ານຊັບສິນທາງປັນຍາ;

- ການຮ້ອງຂໍອື່ນ ກ່ຽວກັບຄະດີການຄ້າ.

ການປົກປ້ອງສິດທາງດ້ານຊັບສິນທາງປັນຍາ ໄດ້ກຳນົດໄວ້ໃນລະບຽບການສະເພາະ[19].

**References:**

1. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ, ສະບັບເລກທີ 52/ສພຊ, ລົງວັນທີ 22/6/2018.
2. ກົດໝາຍ ວ່າດ້ວຍການດຳເນີນແພ່ງ ສະບັບປັບປຸງປີ 2012.
3. ປະມວນເອກະສານຝຶກອົບຮົມທັກສະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ, ການຕັດສິນໂດຍກຳມະການ, ປີ 2020.
4. ປື້ມຄູ່ມືການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ປີ 2017.
5. ແຜນແມ່ບົດ ກ່ຽວກັບການພັດທະນາລັດແຫ່ງກົດໝາຍ ຂອງ ສປປ ລາວ ແຕ່ນີ້ຮອດປີ 2020.
6. ແຜນພັດທະນາຂະແໜງການຍຸຕິທຳ, ພາກທີ III ຍຸດທະສາດຮອດປີ 2025, ຂໍ້ 4.
7. ບົດສະເໜີ "ພັກປະຊາຊົນປະຕິວັດລາວ ໄດ້ວາງນະໂຍບາຍການຕ່າງປະເທດ ຢ່າງຖືກຕ້ອງ ແລະ ສອດຄ່ອງ ໃນແຕ່ລະຍຸກແຕ່ລະສະໄໝ" ໂດຍ: ກົມການຂ່າວ, ກະຊວງການຕ່າງປະເທດ.

[19] ກົດໝາຍ ວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງປີ 2012, ມາດຕາ 38